ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 021 /ທຄຕລ 2020
ນະຄອນຫຼວງວຽງຈັນ, ວັນທີ: 29 FEB 2020

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ໃນນະຄອນຫຼວງວຽງຈັນ.
**ເລື່ອງ** : ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາ Cisco Switch ຈຳນວນ 06 ຊຸດ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງເຊີນມາຍັງບໍລິສັດ, ຫ້າງຮ້ານ ຕົວແທນຈຳໜ່າຍອຸປະກອນໄອທີຊາບວ່າ ທຄຕລ ມີຄວາມຕ້ອງການຈັດຊື້ອຸປະກອນໄອທີ **Cisco Switch ຈຳນວນ 06 ຊຸດ** ເພື່ອມາຮັບໃຊ້ເຂົ້າໃນລະບົບວຽກງານໄອທີ ດັ່ງມີລາຍການຂ້າງລຸ່ມນີ້:

| ລະຫັດ | ລາຍລະອຽດ | ຈຳນວນ |
|---|---|---|
| **C9300-48T-A** | Catalyst 9300 48-port data only, Network Advantage | 6 |
| PWR-C1-715WAC-P | 715WAC Platinum-rated power supply spare | 6 |
| STACK-T1-50CM | 50CM Type 1 Stacking Cable | 6 |
| C9300-NM-8X | Catalyst 9300 8 x 10GE Network Module | 6 |

**I. ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້.**

1. **ຊອງເອກະສານປະກອບມີ:**
   - ໃບທະບຽນວິສາຫະກິດ, ໃບຢັ້ງຢືນການມອບພັນທະອາກອນປີປະຈຸບັນ, ໃບຢັ້ງຢືນເປັນຕົວແທນຈຳ ໜ່າຍອຸປະກອນໄອທີ ຫຼື ມີໃບຢັ້ງຢືນເຄື່ອງໄອທີ ລະບຸປີ, ປະເທດທີ່ຜະລິດອຸປະກອນໄອທີ(SERIES) ຫຼື ມີເອກະສານທີ່ກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ຜົນງານຜ່ານມາທີ່ເຄີຍສະໜອງອຸປະກອນໄອທີດັ່ງກ່າວໃຫ້ພາກສ່ວນອື່ນ, ມີປະສົບການຜົນງານ 03 ປີ ຂຶ້ນໄປ ແລະ ມີວິຊາການບໍລິການຫຼັງການຂາຍ.
   - ກຳນົດຍື່ນຊອງມາດຕະຖານເຕັກນິກດ້ານໄອທີຈະປິດຮັບວັນທີ 13/03/2020 ເວລາ 16:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.
2. **ຊອງໃບສະເໜີລາຄາ** (ຕ້ອງເປັນສະກຸນເງິນກີບລວມອາກອນ).
   - ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າທັງໝົດໃຫ້ຄົບຖ້ວນ.
   - ໃນວັນທີ 20/03/2020 ແມ່ນມື້ເປີດຊອງປະມູນແຈ້ງໃຫ້ ບໍລິສັດ, ຮ້ານຕົວແທນຈຳໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C, ສ່ວນເວລາແມ່ນຈະໄດ້ແຈ້ງຕາມພາຍຫຼັງ.

II. **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ທີ່ຊະນະການປະມູນ, ການຊໍາລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

ງວດທີ 1: ຊໍາລະ 90% ຂອງມູນຄ່າ ພາຍຫລັງໄດ້ຮັບເຄື່ອງ ແລະ ຕິດຕັ້ງເຄື່ອງສໍາເລັດ.

ງວດທີ 2: ຊໍາລະ 10% ຂອງມູນຄ່າທັງໝົດພາຍຫຼັງຄົບກໍານົດຄໍ້າປະກັນ (ໄລຍະ 06 ເດືອນ) ນັບຕັ້ງແຕ່ວັນທີມອບຮັບເຄື່ອງ.

❖ **<u>ໝາຍເຫດ:</u>**

1. ຜູ້ແຂ່ງຂັນປະມູນຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 2% ຂອງມູນຄ່າທັງໝົດ ຫຼື ໜັງສືຄໍ້າປະກັນທີ່ອອກໂດຍທະນາຄານ ມາໃຫ້ ທຄຕລ ໃນມື້ທີ່ນໍາຊອງສະເໜີລາຄາມາຍື່ນ. ພາຍຫລັງປະກາດຜົນ ທຄຕລ ຈະສົ່ງເງິນຄໍ້າປະກັນດັ່ງກ່າວຄືນ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄໍ້າປະກັນການປະຕິບັດສັນຍາຕາມກໍານົດ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ຜູ້ຈັດຊື້-ຈັດຈ້າງໃນມູນຄ່າເທົ່າກັບ 2% ຂອງມູນຄ່າທີ່ສະເໜີປະມູນ.
3. ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນສັນຍາ 10% ຫຼື ຕະຫຼອດອາຍຸຂອງສັນຍາ ຫຼື ສະມາດປະກອບ ໜັງສືຄໍ້າປະກັນຈາກທະນາຄານ ຫຼື ສະຖາບັນການເງິນໃຫ້ ທຄຕລ ຈົນກວ່າຈະໝົດໄລຍະເວລາຄໍ້າປະກັນ.

ດັ່ງນັ້ນ, ຈິ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ສຸພັກ ຖິ່ນໄຊພອນ